**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ.....450........../ພບ

ນະຄອນຫຼວງວຽງຈັນ, ວັນທີ...3..3..2022.........

# ແຈ້ງການ

**ເຖິງ:** - ທ່ານ ຫົວໜ້າກົມຄຸ້ມຄອງບໍ່ແຮ່;
- ທ່ານ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ;
- ບໍລິສັດລົງທຶນດ້ານບໍ່ແຮ່.

**ເລື່ອງ:** ການຕິດຕາມກວດກາ ການເຄື່ອນຍ້າຍແຮ່ທາດ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກໄປຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017.
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.
- ອີງຕາມ ໜັງສືແຈ້ງການຂອງກະຊວງການເງິນ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ສິນຄ້າປະເພດແຮ່ທາດ ສະບັບເລກທີ 5087/ກງ, ລົງວັນທີ 12 ຕຸລາ 2021.
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 0733/ພບ.ກຄຣ6, ລົງວັນທີ 28 ກຸມພາ 2022.

ກະຊວງພະລັງງານ ແລະ ບໍ່ແຮ່ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ວຽກງານການຕິດຕາມກວດກາ ການເຄື່ອນຍ້າຍແຮ່ທາດ ທີ່ຈະຈຳໜ່າຍຢູ່ພາຍໃນປະເທດ ແລະ ສົ່ງອອກໄປຕ່າງປະເທດ ໃຫ້ມີຄວາມເປັນເອກະພາບກັນໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ , ສະນັ້ນ ຈຶ່ງແຈ້ງມາຍັງທຸກພາກສ່ວນ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນລຸ່ມນີ້:

1. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ ສົມທົບພະແນກການເງິນແຂວງ/ນະຄອນຫຼວງ (ຂະແໜງຄຸ້ມຄອງຊັບສິນແຫ່ງລັດ) ຕິດຕາມກວດກາການເຄື່ອນຍ້າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຢູ່ຕົ້ນທາງ ແລະ ສາງເກັບມ້ຽນແຮ່ທາດລະຫວ່າງທາງ ດ້ວຍການອອກໃບຢັ້ງຢືນການເຄື່ອນຍ້າຍແຮ່ທາດ ແລະ ເຮັດບົດບັນທຶກຮ່ວມກັນ ລະຫວ່າງ ພະນັກງານປະຈຳສະໜາມ ແລະ ບໍລິສັດ (ໃຫ້ຫັກລົບຕາມໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ ທີ່ກົມຄຸ້ມຄອງບໍ່ແຮ່ອອກໃຫ້). ຫ້າມບໍ່ໃຫ້ອອກໜັງສືໃດໆຕື່ມອີກ ທີ່ເປັນສິ່ງກີດຂວາງ ແລະ ສ້າງຄວາມຫຍຸ້ງຍາກແກ່ຜູ້ປະກອບການ.
2. ພະນັກງານປະຈຳພາກສະໜາມ ແມ່ນປະກອບດ້ວຍຜູ້ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ ສົມທົບພະແນກການເງິນແຂວງ/ນະຄອນຫຼວງ (ຂະແໜງຄຸ້ມຄອງຊັບສິນແຫ່ງລັດ) ພາກສ່ວນລະ 1 ຄົນເທົ່ານັ້ນ; ກໍລະນີ ພະນັກງານຂັ້ນແຂວງບໍ່ສາມາດເຂົ້າຮ່ວມໄດ້ ແມ່ນມອບໃຫ້ສາຍຕັ້ງຂອງຕົນຢູ່ຂັ້ນເມືອງເຂົ້າຮ່ວມແທນ.
3. ສຳລັບໂຄງການບໍ່ແຮ່ຂະໜາດໃຫຍ່ ຫຼື ໂຄງການໃດທີ່ເຫັນວ່າຂັ້ນທ້ອງຖິ່ນຍັງບໍ່ສາມາດຕິດຕາມກວດກາໄດ້ ແມ່ນມອບໃຫ້ກົມຄຸ້ມຄອງບໍ່ແຮ່ເປັນຜູ້ປະຕິບັດ ແລະ ພິຈາລະນາຕາມຄວາມເໝາະສົມ.

4. ສໍາລັບສິ່ງອໍານວຍຄວາມສະດວກ ແລະ ຄ່າແຮງງານ ຂອງພະນັກງານປະຈໍາພາກສະໜາມ ແມ່ນມອບໃຫ້ບໍລິສັດທີ່ກ່ຽວຂ້ອງຮັບຜິດຊອບ ໂດຍໃຫ້ອີງຕາມລະບຽບການຂອງກະຊວງການເງິນວາງອອກ.
5. ສໍາລັບການຕິດຕາມກວດກາແຮ່ທາດ ທີ່ຈະເຄື່ອນຍ້າຍ ຫຼື ສົ່ງອອກດ້ວຍລົດໄຟລາວ-ຈີນ ແມ່ນມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ/ນະຄອນຫຼວງ ສົມທົບພະແນກການເງິນແຂວງ/ນະຄອນຫຼວງ (ຂະແໜງຄຸ້ມຄອງຊັບສິນແຫ່ງລັດ) ຕິດຕາມກວດກາຢູ່ສາງຄ່ຽນຖ່າຍສິນຄ້າ (ສາງຄ່ຽນຖ່າຍທີ່ຍັງບໍ່ໄດ້ຮັບອະນຸຍາດເຂົ້າເປັນລະບົບສາງຈາກກະຊວງການເງິນ) ດ້ວຍການອອກໃບຢັ້ງຢືນການເຄື່ອນຍ້າຍແຮ່ທາດ ແລະ ເຮັດບົດບັນທຶກຮ່ວມກັນ ລະຫວ່າງ ພະນັກງານປະຈໍາສະໜາມ ແລະ ບໍລິສັດ. ສໍາລັບແຮ່ທາດທີ່ຢູ່ໃນສາງຄ່ຽນຖ່າຍສິນຄ້າທີ່ໄດ້ຮັບອະນຸຍາດຈາກກະຊວງການເງິນ ຫຼື ຢູ່ໃນເຂດທ່າບົກ ທີ່ເປັນຈຸດກໍານົດເປັນດ່ານນໍາເຂົ້າ-ສົ່ງອອກສິນຄ້າ ແມ່ນມອບໃຫ້ຂະແໜງການເງິນ (ພາສີ) ເປັນຜູ້ຕິດຕາມກວດກາ.
6. ພະນັກງານປະຈໍາສະໜາມ ຕ້ອງລາຍງານຂໍ້ມູນການຕິດຕາມກວດກາການເຄື່ອນຍ້າຍແຮ່ທາດ ໃຫ້ສາຍຕັ້ງຂອງຕົນ ແລະ ກົມຄຸ້ມຄອງບໍ່ແຮ່ ຢ່າງເປັນປະຈໍາ (ປະຈໍາ ອາທິດ, ເດືອນ ແລະ ປີ).

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການນີ້ດ້ວຍ.

**ລັດຖະມົນຕີ**

ປອ. ດາວວົງ ພອນແກ້ວ

**ສໍາເນົາສົ່ງ:**

- ກະຊວງການເງິນ 1 ສະບັບ;
- ຫ້ອງການກະຊວງ ພບ 1 ສະບັບ;
- ກົມກວດກາ, ກະຊວງ ພບ 1 ສະບັບ;
- ເກັບມ້ຽນ 2 ສະບັບ.